ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 02868/ກພສ
ນະຄອນຫຼວງວຽງຈັນ, ວັນທີ 01 JUN 2018

# ແຈ້ງການ

ເຖິງ: ຫົວໜ້າ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ແບບພິມໃບຕິດຕາມ ການຍົກເວັ້ນພາສີ-ອາກອນຂາເຂົ້າ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຂໍ້ຕົກລົງ ກົມພາສີ ສະບັບເລກທີ 01179/ກພສ, ລົງວັນທີ 15 ມີນາ 2018 ວ່າດ້ວຍໜ້າທີ່ ແລະ ແບບແຜນວິທີເຮັດວຽກຂອງ ຂະແໜງໃນກອງຄຸ້ມຄອງພາສີ, ໜ່ວຍງານໃນກອງກວດກາພາສີປະຈຳແຂວງ ແລະ ໜ່ວຍງານຂອງ ດ່ານພາສີຊາຍແດນ.
- ອີງຕາມ ຄຳແນະນຳ ກົມພາສີ ສະບັບເລກທີ 02518/ກພສ, ລົງວັນທີ 21/05/2018 ວ່າດ້ວຍການຄຸ້ມຄອງການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບພາສີ ຫຼື ເສຍພາສີຫຼຸດຜ່ອນ.

ກົມພາສີ ແຈ້ງມາຍັງ ຫົວໜ້າ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ຊາບກ່ຽວກັບເລື່ອງການປັບປຸງ ແບບພິມ ໃບອະນຸຍາດຍົກເວັ້ນພາສີ-ອາກອນຂາເຂົ້າ ປ່ຽນມາເປັນ ໃບຕິດຕາມ ການຍົກເວັ້ນພາສີ-ອາກອນຂາເຂົ້າ ມີລາຍລະອຽດດັ່ງນີ້:

1. ກົມພາສີ ໄດ້ມີການປັບປຸງແບບພິມ ໃບອະນຸຍາດຍົກເວັ້ນພາສີ-ອາກອນຂາເຂົ້າ ທີ່ນຳໃຊ້ໃນເມື່ອກ່ອນປ່ຽນມາເປັນ ໃບຕິດຕາມ ການຍົກເວັ້ນພາສີ-ອາກອນຂາເຂົ້າ.
2. ການນຳໃຊ້ແບບພິມ ໃບຕິດຕາມການຍົກເວັ້ນພາສີ-ອາກອນຂາເຂົ້າ ໃຫ້ມີຄວາມເປັນເອກະພາບກັນໃນການເກັບກຳສະຖິຕິສິນຄ້າ, ເຄື່ອງຂອງ ທີ່ຖືກຍົກເວັ້ນ ຫຼື ເສຍພາສີຫຼຸດຜ່ອນ ເພື່ອດຳເນີນຂັ້ນຕອນໃນລັດຖະການພາສີແລ້ວຈຶ່ງນຳໄປແຈ້ງພາສີເປັນລາຍລະອຽດຢູ່ດ່ານບ່ອນນຳເຂົ້າ.
3. ໃຫ້ເລີ່ມຈັດຕັ້ງປະຕິບັດແບບພິມດັ່ງກ່າວນັບແຕ່ ວັນທີ 01 ມິຖຸນາ 2018 ເປັນຕົ້ນໄປ.
4. ໃນການຈັດຕັ້ງປະຕິບັດຫາກພົບຄວາມຫຍຸ້ງຍາກໃຫ້ລາຍງານກົມພາສີ ເພື່ອມີວິທີແກ້ໄຂຕາມກົດໝາຍແລະລະບຽບການ.
5. ແຈ້ງການ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ

ບ່ອນສົ່ງ:
- ພະແນກອ້ອມຂ້າງກົມພາສີ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ກອງຄຸ້ມຄອງພາສີ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ກອງກວດກາພາສີປະຈຳແຂວງ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ດ່ານພາສີຊາຍແດນ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ເກັບມ້ຽນສຳເນົາ 01 ສະບັບ.